ບົດອອກຂ່າວ

# ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ປີ 2025

## ໂດຍ: ທ່ານ ສັນຕິພາບ ພົມວິຫານ, ລັດຖະມົນຕີ ກະຊວງການເງິນ

*ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ*

*ວັນທີ 19 ພະຈິກ 2025*

---

ໃນວັນທີ 19 ພະຈິກ 2025, ລັດຖະບານ ແຫ່ງ ສປປ ລາວຮ່ວມກັບ ອົງການ ສປຊ ໄດ້ຈັດກອງປະຊຸມປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ຂຶ້ນ ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ພາຍໃຕ້ຫົວໜ້າຂໍ້ "ເພີ່ມທະວີການເປັນຄູ່ຮ່ວມເພື່ອການພັດທະນາ ທີ່ມີປະສິດທິຜົນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ X (2026-2030) ເພື່ອພ້ອມກັນກ້າວເຂົ້າສູ່ການຫຼຸດພົ້ນອອກຈາກ ສະຖານະພາບດ້ອຍພັດທະນາ ຢ່າງມີສະຖຽນລະພາບ, ໝັ້ນທ່ຽງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ" ໃຫ້ກຽດເຂົ້າຮ່ວມ ແລະ ກ່າວປາໄສເປີດກອງປະຊຸມ ໂດຍ ພະນະທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ດຳເນີນກອງປະຊຸມ ໂດຍ ພະນະທ່ານ ສະຫຼືມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ເຊິ່ງມີຜູ້ແທນເຂົ້າຮ່ວມຫຼາຍກວ່າ 500 ທ່ານປະກອບມີ: ສະພາແຫ່ງຊາດ, ຮອງຫົວໜ້າຄະນະຈັດຕັ້ງສູນກາງ, ກະຊວງຂະແໜງການ, ອົງການທຽບເທົ່າກະຊວງ ລວມທັງ ນະຄອນຫຼວງ ແລະ 17 ແຂວງ, ບັນດາຜູ້ແທນລະດັບສູງ ຈາກປະເທດເພື່ອນມິດ, ວົງສາຄະນາຍາດສາກົນ, ຄູ່ຮ່ວມພັດທະນາ ທັງທີ່ມີສຳນັກງານ/ອົງການຕັ້ງຢູ່ ສປປ ລາວ ແລະ ບໍ່ໄດ້ຕັ້ງຢູ່ ສປປ ລາວ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ.

ກອງປະຊຸມໂຕະມົນ ລະດັບສູງ ໃນຄັ້ງນີ້ ໄດ້ດຳເນີນມາເປັນເວລາ 1 ວັນເຕັມ.

ພະນະທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ຍົກໃຫ້ເຫັນໃຫ້ຄວາມສຳຄັນຂອງຂະບວນການກອງປະຊຸມໂຕະມົນ ເຊິ່ງມີຈຸດປະສົງ ເພື່ອເປີດເວທີ ປຶກສາຫາລືແລກປ່ຽນຄຳຄິດເຫັນ ກ່ຽວກັບວຽກງານການພັດທະນາ ຮ່ວມກັນ ລະຫວ່າງ ລັດຖະບານ ແລະ ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດ ແລະ ທຸກພາກສ່ວນໃນສັງຄົມ. ສິ່ງສຳຄັນອີກປະການໜຶ່ງ ກໍ່ຄື ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານທີ່ສຳຄັນ ຈຳນວນໜຶ່ງ ແລະ ຢັ້ງຢືນຄືນຄຳໝາຍໝັ້ນໃນການສືບຕໍ່ສະໜັບສະໜູນ ໃນການຈັດຕັ້ງປະຕິບັດວຽກງານການພັດທະນາ ຂອງ ສປປ ລາວ ເປັນຕົ້ນ:



สแกนด้วย CamScanner

- ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ໄດ້ຢືນຢັນຄືນໃໝ່ເຖິງຄຳໝັ້ນສັນຍາ ໃນການສະໜັບສະໜູນຢ່າງເຕັມສ່ວນ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDGs);
- ສືບຕໍ່ແກ້ໄຂ ແລະ ຟື້ນຟູເສດຖະກິດ ທີ່ເປັນຜົນພວງຈາກການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃນໄລຍະຜ່ານມາ ເພື່ອກ້າວໄປສູ່ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໂດຍສຸມໃສ່ການສ້າງຄວາມອາດສາມາດການຜະລິດ ແລະ ບໍລິການພາຍໃນ, ເພີ່ມທະວີທ່າແຮງບົ່ມຊ້ອນຂອງວິສາຫະກິດພາຍໃນປະເທດ ແລະ ສາມາດເຊື່ອມໂຍງເຂົ້າສູ່ຕ່ອງໂສ້ມູນຄ່າການຜະລິດຂອງສາກົນ ແລະ ພາກພື້ນ;
- ສືບຕໍ່ຮັກສາສະຖຽນລະພາບດ້ານເສດຖະກິດມະຫາພາກ ໂດຍສະເພາະ ຄຸ້ມຄອງອັດຕາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ, ປັບປຸງລະບົບການເກັບລາຍຮັບງົບປະມານໃຫ້ມີຄວາມທັນສະໄໝ, ໂປ່ງໃສ ແລະ ເຂັ້ມແຂງ;
- ສືບຕໍ່ສຸມໃສ່ປັບປຸງໂຄງລ່າງພື້ນຖານ ໂດຍສະເພາະ ບັນດາເສັ້ນທາງຄົມມະນາຄົມ ຕາມແລວທາງເສດຖະກິດຕ່າງໆ, ທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ;
- ສືບຕໍ່ສຸມໃສ່ພັດທະນາຊັບພະຍາກອນມະນຸດ ເປັນຕົ້ນ ປັບປຸງຄຸນນະພາບການສຶກສາໃຫ້ດີຂຶ້ນກວ່າເກົ່າ ແນ່ໃສ່ສ້າງຊັບພະຍາກອນມະນຸດທີ່ເຂັ້ມແຂງປະກອບສ່ວນເຂົ້າສູ່ການຜະລິດ ແລະ ບໍລິການພາຍໃນ ໂດຍສະເພາະ ປັບປຸງລະບົບການສຶກສາສາຍສາມັນສຶກສາ, ຄົ້ນຄວ້າເພີ່ມນະໂຍບາຍອາຫານທ່ຽງໃຫ້ນັກຮຽນ, ເບ້ຍລ້ຽງໃຫ້ນັກຮຽນ-ນັກສຶກສາ; ປັບປຸງລະບົບສາທາລະນະສຸກ ໂດຍຮັບປະກັນການສະໜອງເຄື່ອງມື ແລະການບໍລິການສາທາລະນະສຸກທີ່ມີຄຸນນະພາບ;
- ສືບຕໍ່ການກະກຽມຄວາມພ້ອມ ໃນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຂອງ ສປປ ລາວ ເປັນຕົ້ນ ການສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເຮັດໃຫ້ການພັດທະນາມີຄຸນນະພາບ ແລະ ຍືນຍົງ, ສົ່ງເສີມບົດບາດການມີສ່ວນຮ່ວມຂອງພາກເອກະຊົນ ຕໍ່ກັບວຽກງານການພັດທະນາ, ເພີ່ມທະວີປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ. ພ້ອມທັງ, ສືບຕໍ່ປະຕິບັດ



สแกนด้วย CamScanner

ບັນດາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເພື່ອຮັບປະກັນພາຍຫຼັງຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາແລ້ວ, ສປປ ລາວ ຕ້ອງເປີດປະຕູສູ່ແນວທາງໃໝ່ ໃນການພັດທະນາ - ການເຕີບໂຕ, ສົ່ງເສີມການມີວຽກເຮັດງານທໍາ ແລະ ເຕັກໂນໂລຊີ ພ້ອມຮັບປະກັນການເຕີບໂຕສີຂຽວ ໂດຍຈະເນັ້ນໃສ່ການພັດທະນາເສດຖະກິດ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ;

– ຜົນສໍາເລັດຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ປີ 2025 ໃນຄັ້ງນີ້, ກະຊວງການເງິນ ໃນນາມຜູ້ປະຈໍາການຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ຈະປະສານສົມທົບກັບພາກ ສ່ວນກ່ຽວຂ້ອງສັງລວມ ແລະ ລາຍງານ ຕໍ່ ລັດຖະບານ ສປປ ລາວ ເພື່ອມີທິດຊີ້ນໍາ ແລະ ເປັນບ່ອນອີງໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ສິດໜ້າທີ່ຂອງຕົນ.

ໃນຕອນທ້າຍຂອງທີ່ປະຊຸມໄດ້ຮັບທິດຊີ້ນໍາຈາກ ພະນະທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ໂດຍທ່ານໄດ້ຕີລາຄາສູງເຖິງຜົນສໍາເລັດຂອງກອງປະຊຸມໃນຄັ້ງນີ້ ທີ່ຄວາມໝາຍຄວາມສໍາຄັນ ແລະ ເຕັມໄປດ້ວຍເນື້ອໃນທີ່ອຸດົມສົມບູນ ເພື່ອໃຫ້ແຕ່ລະພາກສ່ວນນໍາໄປຄົ້ນຄວ້າ ແລະ ຮ່ວມກັນຈັດຕັ້ງປະຕິບັດໃຫ້ບັນລຸເປົ້າໝາຍ ດັ່ງນີ້: ພວກເຮົາຈະໄດ້ພ້ອມກັນ ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສຸມໃສ່ການບັນລຸ 6 ຄາດໝາຍ ຄື: (1) ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ; (2) ການພັດທະນາຊັບພະຍາກອນມະນຸດ; (3) ສົ່ງເສີມຊີວິດການເປັນຢູ່ທີ່ດີ ແລະ ສັງຄົມທີ່ໜ້າຢູ່; (4) ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຕ່າງໆ; (5) ສ້າງໂຄງລ່າງທີ່ມີຄວາມທົນທານ ເພື່ອເຊື່ອມໂຍງ-ເຊື່ອມຈອດ ໃນທຸກລະດັບ; ແລະ (6) ປັບປຸງການຄຸ້ມຄອງບໍລິຫານລັດ ຢ່າງມີປະສິດທິຜົນ.

ສໍາລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:

ທ່ານ ສັນຕິ ຊົງນາວົງ ຫົວໜ້າພະແນກ ອົງການຈັດຕັ້ງສາກົນ

ກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ.

ເບີໂທຕິດຕໍ່ +85620 22 223 989 ອີເມວ: songnavong@gmail.com



สแกนด้วย CamScanner